ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງບໍລິຄໍາໄຊ
ພະແນກໂຍທາທິການ ແລະ ຂົນສົ່ງ

ເລກທີ.....1579...../ຍທຂ
ບໍລິຄໍາໄຊ, ວັນທີ...6 / 4/ 04 / 2026.......

**ຊື່ໂຄງການ: ວຽກບູລະນະຮັກສາ ແລະ ສ້ອມແປງທາງຫຼວງແຫ່ງຊາດປີ 2026.**

## ໜັງສືເຊີນເຂົ້າຮ່ວມແຂ່ງຂັນປະມູນ

**ພະແນກໂຍທາທິການ ແລະ ຂົນສົ່ງແຂວງບໍລິຄໍາໄຊ,** ໄດ້ຮັບການຊີ້ນໍາຈາກຂັ້ນເທິງໃນການຈັດຕັ້ງປະຕິບັດ ການປະມູນຈັດຊື້-ຈັດຈ້າງ ໂຄງການ : ວຽກບູລະນະຮັກສາ ແລະ ສ້ອມແປງທາງຫຼວງແຫ່ງຊາດເລກ 8 ກມ 0+000 - ກມ 66+000 (ແຕ່ບ້ານວຽງ ຫາ ບ້ານໂພນຕານ) ລວງຍາວ 66 ກມ;

1. ດ້ວຍການດໍາເນີນການປະມູນເປີດກວ້າງພາຍໃນ ສໍາລັບບ້ວງເງິນທີ່ຈະຊໍາລະສະສາງ ແມ່ນນໍາໃຊ້ງົບປະມານກອງທຶນທາງໄດ້ຮັບອະນຸມັດ ປະຈໍາປີ 2026;
2. ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄໍາໄຊ ຂໍເຊີນບັນດາບໍລິສັດ ທີ່ມີໃບອານຸຍາດດໍາເນີນທຸລະກິດດ້ານການກໍ່ສ້າງຂົວ-ທາງ ທີ່ມີຄວາມສົນໃຈ, ເຂົ້າຮ່ວມປະມູນໂຄງການດັ່ງກ່າວນີ້, ໄລຍະການກໍ່ສ້າງສ້ອມແປງແມ່ນ 12 ເດືອນ;
3. ການປະມູນ ຈະດໍາເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກໍານົດໄວ້ ຢູ່ໃນກົດໝາຍ ວ່າດ້ວຍການປະມູນຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການປະມູນຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ ລົງວັນທີ 13 ກຸມພາ 2019;
4. ການປະມູນນີ້ ແມ່ນອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄວາມເໝາະສົມ, ມີໃບອະນຸຍາດດໍາເນີນທຸລະກິດຖືກຕ້ອງຕາມກົດຫມາຍທີ່ກ່ຽວພັນກັບວຽກທີ່ຈະດໍາເນີນການກໍ່ສ້າງ ຢູ່ໃນຂອບເຂດ ແຂວງບໍລິຄໍາໄຊ ຫຼື ທົ່ວປະເທດ;
5. ບໍລິສັດທີ່ມີຄວາມເໝາະສົມສົນໃຈ ສາມາດຕິດຕໍ່ພົວພັນ ແລະ ຊື້ເອກະສານປະມູນໄດ້ທີ່ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄໍາໄຊ ຂະແໜງຂົວທາງ ຢູ່ບ້ານທົ່ງໄຊ ເມືອງປາກຊັນ ແຂວງບໍລິຄໍາໄຊ ໂທລະສັບ/ແຟັກ: 054-212091 ແລະ ຂະແໜງການຈັດຊື້-ຈັດຈ້າງພະແນກການເງິນແຂວງ ໃນວັນ ແລະ ເວລາລັດຖະການ: ວັນຈັນ - ວັນສຸກ, ເວລາ 8:00-12:00ໂມງ ແລະ 13:00-16:00ໂມງ ໂດຍໃຫ້ຍື່ນໜັງສືສະເໜີຫາ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄໍາໄຊ ເລີ່ມແຕ່ວັນທີ 6 ເມສາ 2026 ເປັນຕົ້ນໄປ ໃນລາຄາ **1.000.000** ກີບ/ຊອງ, ຈໍານວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ ວິທີການຊໍາລະຕ້ອງຈ່າຍເປັນເງິນສົດ;
6. ຊອງປະມູນຕ້ອງສົ່ງ ໃນເວລາ ຫລື ກ່ອນເວລາ 09:00 ໂມງ ຂອງວັນທີ 21 ພຶດສະພາ 2026 ຊອງປະມູນໃດ ທີ່ສົ່ງຊ້າກວ່າເວລາທີ່ກໍານົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ.
7. ກອງປະຊຸມ ກ່ອນການຍື່ນຊອງປະມູນ ແລະ ເຂົ້າຢ້ຽມຢາມພາກສະໜາມ (site visit) ຈະໄດ້ຈັດຂຶ້ນໃນວັນທີ 12 ພຶດສະພາ 2026, ເວລາ 8:30 ໂມງເຊົ້າ, ການເປີດຊອງປະມູນ ຈະໄດ້ຈັດຂຶ້ນທີ່ ຫ້ອງປະຊຸມຂະແໜງຂົວທາງ ພະແນກ

2

ໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄຳໄຊ, ທາງ 21 ບ້ານທົ່ງໄຊ, ເມືອງປາກຊັນ ແຂວງບໍລິຄຳໄຊ ໃນເວລາ 09:00 ໂມງ ຂອງວັນ 21 ພຶດສະພາ 2026 ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ເຂົ້າແຂ່ງຂັນປະມູນ ທີ່ສົນໃຈເຂົ້າຮ່ວມນຳ;

8. ເອກະສານປະມູນ ຕ້ອງໄດ້ປະກອບຫນັງສືຄ້ຳປະກັນການປະມູນມາພ້ອມໃນມູນຄ່າບໍ່ຫຼຸດ 2 % ຂອງມູນຄ່າປະມູນໂດຍຫນັງສືຄ້ຳປະກັນການປະມູນ ຕ້ອງແມ່ນຫນັງສືຄ້ຳປະກັນຂອງທະນາຄານ ທີ່ຖືກຕ້ອງກັບແບບຟອມ ທີ່ໄດ້ກຳນົດໄວ້ຢູ່ໃນເອກະສານປະມູນ.

**ເຊັນແທນຫົວໜ້າພະແນກ**

**ຮອງຫົວໜ້າພະແນກ**

ຕິດຕໍ່:

1. ທ່ານ ກ້ອນນວນດຳ ຈັນທະມີນາວົງ ໂທ: 020 22117888
2. ທ່ານ ຄຳປະເສີດ ພັນທະວົງ ຈະແໜງຈັດຊື້-ຈັດຈ້າງ ພະແນກການເງິນແຂວງ ໂທ: 020 28870055

(ກະຊວງໂຍທາທິການ ແລະ ຂົນສົ່ງ — ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄຳໄຊ)

ປອ ສົມບົກ ແກ້ວມະນີ